**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ກະຊວງພາຍໃນ**

ເລກທີ 05 /ພນ

ນະຄອນຫຼວງວຽງຈັນ, ວັນທີ 31 ທັນວາ 2019

# ຄຳແນະນຳ

## ກ່ຽວກັບການປະເມີນຜົນ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ

**ຮຽນ :** ທ່ານ ລັດຖະມົນຕີ, ຫົວໜ້າອົງການ ຂັ້ນສູນກາງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1862 /ຫສນຍ, ລົງວັນທີ 18 ຕຸລາ 2019 ທິດນຳກ່ຽວກັບການສືບຕໍ່ຊຸກຍູ້, ຊີ້ນຳຂະບວນການແຂ່ງຂັນຮັກຊາດ, ສ້າງບ້ານພັດທະນາ ແລະ ການຜັນຂະຫຍາຍວຽກງານ 3 ສ້າງ ເຂົ້າສູ່ລວງເລິກໃນຂອບເຂດທົ່ວປະເທດ.

ພາຍຫຼັງ ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດຊຸດທີ 7 ໄດ້ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຜົນສຳເລັດຂອງການຈັດຕັ້ງປະຕິບັດການເຮັດທົດລອງວຽກງານ 3 ສ້າງ ແລະ ຕົກລົງໃຫ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ເປັນວຽກປົກກະຕິຂອງລັດຖະບານ. ລັດຖະບານໄດ້ຕົກລົງມອບວຽກງານດັ່ງກ່າວ ໃຫ້ກະຊວງພາຍໃນ ເປັນເສນາທິການຊ່ວຍນາຍົກລັດຖະມົນຕີ ໃນການແນະນຳການຜັນຂະຫຍາຍ, ຕິດຕາມ, ຊຸກຍູ້, ສັງລວມ ແລະ ປະເມີນຜົນ ວຽກງານ 3 ສ້າງ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016, ແລະ ຂໍ້ຕົກລົງສະບັບເລກທີ 57/ນຍ, ລົງວັນທີ 22 ກໍລະກົດ 2016 ວ່າດ້ວຍການຊັບຊ້ອນບາງວຽກງານຂອງລັດຖະບານ. ກະຊວງພາຍໃນ ໄດ້ອອກຄຳແນະນຳສະບັບ ເລກທີ 02/ພນ, ລົງວັນທີ 14 ກຸມພາ 2017 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 34/ນຍ ຊຶ່ງນິຕິກຳເຫຼົ່ານີ້ ໄດ້ກຳນົດຫຼັກການ, ກົນໄກ, ວິທີການຕ່າງໆ ຢ່າງລະອຽດ, ຈະແຈ້ງ; ເຖິງຢ່າງໃດກໍຕາມ, ຜ່ານມາການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຍັງບໍ່ທັນໄດ້ດີ ເທົ່າທີ່ຄວນ; ການ

ສະຫຼຸບລາຍງານປະເມີນຜົນຕ່າງຄົນຕ່າງເຮັດ ບໍ່ທັນມີຄວາມເປັນເອກະພາບ. ສະນັ້ນ, ເພື່ອເຮັດໃຫ້ການປະເມີນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີກະຊວງພາຍໃນ**
**ອອກຄຳແນະນຳ ກ່ຽວກັບການປະເມີນຜົນຈັດຕັ້ງປະຕິບັດວຽກງານ 3 ສ້າງ ດັ່ງນີ້ :**

## I. ຈຸດປະສົງ ແລະ ລະດັບຄາດໝາຍ

1. ເພື່ອກຳນົດຫຼັກການ, ວິທີການລະອຽດ ແລະ ຂັ້ນຕອນການປະເມີນຜົນ ວຽກງານ 3 ສ້າງ;

2. ເພື່ອເປັນມາດຖານສຳລັບການຄົ້ນຄວ້າ ສ້າງຄວາມຮັບຮູ້ເຂົ້າໃຈທີ່ເປັນເອກະພາບ, ການຈັດຕັ້ງປະຕິບັດການປະເມີນຕົວຈິງໃຫ້ໄປໃນລວງດຽວກັນໃນຂອບເຂດທົ່ວປະເທດ ຕາມທີ່ໄດ້ໄດ້ກຳນົດໄວ້ໃນແບບຟອມການປະເມີນຜົນທີ່ເປັນເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້;

3. ເພື່ອເປັນບ່ອນອີງໃຫ້ແກ່ບັນດາກະຊວງ, ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ປະຕິບັດຢ່າງເປັນເອກະພາບກັນໃນການປະເມີນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນແຕ່ລະໄລຍະ.

## II. ຫຼັກການໃນການປະເມີນຜົນ

1. ການປະເມີນຜົນຕ້ອງໃຫ້ສອດຄ່ອງກັບມະຕິ, ຄຳສັ່ງຂອງພັກ, ລະບຽບ ແລະ ກົດໝາຍຂອງລັດ;

2. ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ຖືກກັບຕົວຈິງໂດຍມີການປະສານສົມທົບກັບກະຊວງ, ອົງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອຄວາມເປັນເອກະພາບກັນ;

3. ການປະເມີນຕ້ອງໃຫ້ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ, ໃຫ້ປະຕິບັດຖືກຕ້ອງຕາມຂັ້ນຕອນ, ມີຄວາມຊັດເຈນທາງດ້ານຂໍ້ມູນ, ມີການວິເຄາະທີ່ມີລັກສະນະວິທະຍາສາດ ສາມາດຢັ້ງຢືນລະດັບຄາດໝາຍໃນແຕ່ລະດ້ານໄດ້ຢ່າງສົມເຫດສົມຜົນ ຕາມມາດຕະຖານຂອງແຕ່ລະແໜງການກຳນົດໄວ້.

## III. ເນື້ອໃນ ການປະເມີນຜົນ

ການປະເມີນຜົນ ແມ່ນຂະບວນການຕິດຕາມກວດກາຄວາມກ້າວໜ້າຂອງການຈັດຕັ້ງປະຕິບັດວຽກງານໃດໜຶ່ງ ເພື່ອເປັນການຊີ້ໃຫ້ເຫັນວ່າ ສຳເລັດຕາມວັດຖຸປະສົງ, ລະດັບຄາດໝາຍຕາມທີ່ກຳນົດໄວ້ ຫຼື ບໍ່? ການປະເມີນຜົນວຽກງານ 3 ສ້າງ ແມ່ນປະເມີນ ໄປຕາມມາດຖານທີ່ໄດ້ກຳນົດໄວ້ຢູ່ໃນມະຕິ 25/ກມສພ ແລະ ມີດຳລັດ, ຄຳສັ່ງ, ຄຳແນະນຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານ 3 ສ້າງ ເປັນບ່ອນອີງໃນການປະເມີນ, ຊຶ່ງໄດ້ເຮັດເປັນແບບຟອມປະເມີນຜົນ ຄັດຕິດມາພ້ອມນີ້. ສຳລັບການປະເມີນທີ່ບໍ່ໄດ້ກຳນົດໃນແບບຟອມຕາມຄຳແນະນຳສະບັບນີ້, ຖ້າຂະແໜງການທີ່ກ່ຽວຂ້ອງ ເຫັນວ່າ ມີຜົນຕໍ່ການປະເມີນ ແມ່ນໃຫ້ຂະແໜງການທີ່ກ່ຽວຂ້ອງຕົກລົງເປັນເອກະພາບ ເພີ່ມເຕີມເຂົ້າໃສ່ ເພື່ອເຮັດໃຫ້ວຽກງານຂອງຂະແໜງການຕົນມີເນື້ອໃນໜັກແໜ້ນເລິກເຊິ່ງ ແລະ ສາມາດຜັນຂະຫຍາຍກວ້າງອອກໄດ້.

❖ **ບາດກ້າວໃນການປະເມີນ**

- ແຕ່ງຕັ້ງຄະນະຮັບຜິດຊອບ
- ດຳເນີນການປະເມີນຜົນ (ວິທີການ, ໄລຍະເວລາ ແລະ ງົບປະມານ ໃນການປະເມີນຜົນ)
- ສະຫຼຸບລາຍງານ
- ຮັບຮອງ ແລະ ຢັ້ງຢືນ

1. **ການແຕ່ງຕັ້ງຄະນະຮັບຜິດຊອບໃນການປະເມີນວຽກງານ 3 ສ້າງ**

**1.1 ແຂວງ, ນະຄອນຫຼວງ** ແຕ່ງຕັ້ງຄະນະກຳມະການປະເມີນຜົນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ຊຶ່ງປະກອບດ້ວຍ :

| | | |
|---|---|---|
| 1) | ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ | ຫົວໜ້າຄະນະ |
| 2) | ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ (1 ທ່ານ) | ຮອງ |
| 3) | ຫົວໜ້າຫ້ອງວ່າການແຂວງ/ ນະຄອນຫຼວງ | ຮອງ |
| 4) | ຫົວໜ້າພະແນກພາຍໃນ | ຮອງ |
| 5) | ບັນດາຫົວໜ້າພະແນກ, ຫົວໜ້າອົງການອອ້ມຂ້າງແຂວງ/ນະຄອນຫຼວງ | ກຳມະການ |
| 6) | ກອງເລຂາຈຳນວນໜຶ່ງຕາມການຕົກລົງຂອງຫົວໜ້າຄະນະ | ຮັບຜິດຊອບດ້ານວິຊາການ. |

**2.2 ເມືອງ, ນະຄອນ** ແຕ່ງຕັ້ງຄະນະກຳມະການປະເມີນຜົນການສ້າງເມືອງເຂັ້ມແຂງຮອບດ້ານ ແລະ ສ້າງບ້ານ ເປັນຫົວໜ່ວຍພັດທະນາ ຊຶ່ງປະກອບດ້ວຍ :

| | | |
|---|---|---|
| 1) | ເຈົ້າເມືອງ, ເຈົ້ານະຄອນ | ຫົວໜ້າຄະນະ |
| 2) | ຮອງເຈົ້າເມືອງ, ຮອງເຈົ້ານະຄອນ (1 ທ່ານ) | ຮອງ |
| 3) | ຫົວໜ້າຫ້ອງວ່າການ | ຮອງ |
| 4) | ຫົວໜ້າຫ້ອງການພາຍໃນ | ຮອງ |
| 5) | ບັນດາຫົວໜ້າຫ້ອງການ, ຫົວໜ້າອົງການອອ້ມຂ້າງເມືອງ/ນະຄອນ | ກຳມະການ |
| 6) | ກອງເລຂາຈຳນວນໜຶ່ງຕາມການຕົກລົງຂອງຫົວໜ້າຄະນະ | ຮັບຜິດຊອບດ້ານວິຊາການ. |

ຖ້າບ້ານໃດຫາກມີເງື່ອນໄຂສະດວກ ໃຫ້ເອົານາຍບ້ານເຂົ້າເປັນຄະນະຮັບຜິດຊອບນຳ ເພື່ອເປັນການຊຸກຍູ້ ແລະ ສົ່ງເສີມການມີສ່ວນຮ່ວມເຂົ້າໃນການພັດທະນາຂອງຮາກຖານຂັ້ນເທື່ອລະກ້າວ.

2. **ວິທີການປະເມີນ**

**2.1** ໃຫ້ປະເມີນຕາມແບບຟອມປະເມີນ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ 7 ດ້ານ ແລະ ບັນດາຕົວຊີ້ບອກ; ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ 5 ດ້ານ ແລະ ບັນດາຕົວຊີ້ບອກ; ສ້າງບ້ານເປັນຫົວໜ່ວຍພັດທະນາ 4 ດ້ານ ແລະ ບັນດາຕົວຊີ້ບອກ, ຊຶ່ງເປັນເອກະສານຊ້ອນທ້າຍຂອງບົດແນະນຳສະບັບນີ້.

**2.2** ໃນແບບຟອມທີ່ເປັນເອກະສານຊ້ອນທ້າຍຂອງບົດແນະນຳສະບັບນີ້ ແຕ່ລະມາດຕະຖານ ມີຕົວຊີ້ບອກ ໃຫ້ໝາຍ √ ຫລື **X** ໃສ່ໃນຫ້ອງ **"ບັນລຸ"** ຫລື **"ບໍ່ບັນລຸ"** ຕາມສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ.

- ແຂວງຫົວໜ່ວຍຍຸດທະສາດ ແຕ່ລະດ້ານແມ່ນຕ້ອງ **"ບັນລຸ"** ຕົວຊີ້ບອກ **80 % ຂຶ້ນໄປ** ໂດຍທຽບໃສ່ຕົວຊີ້ບອກທັງໝົດຂອງແຕ່ລະດ້ານເປັນ 100 %;
- ເມືອງຫົວໜ່ວຍເຂັ້ມແຂງຮອບດ້ານ ແຕ່ລະດ້ານແມ່ນຕ້ອງ **"ບັນລຸ"** ຕົວຊີ້ບອກ **80 % ຂຶ້ນໄປ** ໂດຍທຽບໃສ່ ຕົວຊີ້ບອກທັງໝົດຂອງແຕ່ລະດ້ານເປັນ 100 %;
- ບ້ານຫົວໜ່ວຍພັດທະນາ ແຕ່ລະດ້ານແມ່ນຕ້ອງ **"ບັນລຸ"** ຕົວຊີ້ບອກ **80 % ຂຶ້ນໄປ** ໂດຍທຽບໃສ່ຕົວຊີ້ບອກ ທັງໝົດຂອງແຕ່ລະດ້ານເປັນ 100 %.

**2.3** ແຕ່ລະຕົວຊີ້ບອກທີ່ **"ບັນລຸ"** ຕ້ອງມີສິ່ງອ້າງອີງທີ່ໜ້າເຊື່ອຖືໄດ້.

### 3. ການລາຍງານ ການປະເມີນຜົນ

- ກ່ອນຈະດຳເນີນການປະເມີນຕົວຈິງ ຄະນະຮັບຜິດຊອບ ຕ້ອງໄດ້ທົບທວນຄືນນິຕິກຳຕ່າງໆ ທີ່ຕິດພັນກັບວຽກງານ 3 ສ້າງ ເພື່ອໃຫ້ເກີດຄວາມເຂົ້າໃຈຢ່າງຈະແຈ້ງ ແລະ ເລິກເຊິ່ງ.

- ການເຮັດບົດລາຍງານການປະເມີນຜົນ ຄວນປະກອບມີເນື້ອໃນຫຼັກ ຄື :

+ ສະພາບລວມ;

+ ຜົນສຳເລັດການປະເມີນຜົນ (ຕົວຊີ້ບອກທີ່ <u>ບັນລຸ</u>), ແລະ ສາເຫດທີ່ພາໃຫ້ ບັນລຸ

+ ຂໍ້ຄົງຄ້າງ (ຕົວຊີ້ບອກທີ່ <u>ບໍ່ບັນລຸ</u>);

+ ສາເຫດທີ່ພາໃຫ້ບໍ່ບັນລຸ ໃຫ້ເວົ້າລະອຽດໃນແຕ່ລະຕົວຊີ້ບອກ;

+ ວິທີແກ້ໄຂ;

+ ທິດທາງໃນຕໍ່ໜ້າ;

+ ແລະ ອື່ນໆ.

### 4. ການຢັ້ງຢືນ ແລະ ຮັບຮອງ

- ການຢັ້ງຢືນ ແລະ ຮັບຮອງ ແຂວງທີ່ເປັນຫົວໜ່ວຍຍຸດທະສາດ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ລາຍງານໃຫ້ລັດຖະມົນຕີກະຊວງພາຍໃນ ເພື່ອສະເໜີຫາລັດຖະບານ ພິຈາລະນາ ອອກຂໍ້ຕົກລົງຢັ້ງຢືນ ແລະ ຮັບຮອງ.

- ການຢັ້ງຢືນ ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແມ່ນເຈົ້າເມືອງ, ເຈົ້ານະຄອນ ສະເໜີຫາເຈົ້າແຂວງ ແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ອອກຂໍ້ຕົກລົງຢັ້ງຢືນ ແລະ ຮັບຮອງ.

- ການຢັ້ງຢືນ ບ້ານເປັນຫົວໜ່ວຍພັດທະນາ ແມ່ນ ເຈົ້າເມືອງ, ເຈົ້ານະຄອນ ພິຈາລະນາ ອອກຂໍ້ຕົກລົງຢັ້ງຢືນ ແລະ ຮັບຮອງ.

### 5. ກຳນົດເວລາໃນການປະເມີນຜົນ

- ການປະເມີນການສ້າງບ້ານເປັນຫົວໜ່ວຍພັດທະນາ ແມ່ນປະເມີນຕາມ 04 ດ້ານ ໃຫ້ສຳເລັດໃນ**ເດືອນພຶດສະພາ 2020**.

- ການປະເມີນການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແມ່ນປະເມີນຕາມ 05 ດ້ານ ໃຫ້ສຳເລັດໃນ **ເດືອນ ກໍລະກົດ 2020**.

- ການປະເມີນການສ້າງແຂວງເປັນຫົວໜ່ວຍຍຸດທະສາດ ແມ່ນປະເມີນຕາມ 07 ດ້ານ ໃຫ້ສຳເລັດໃນ**ເດືອນສິງຫາ 2020**.

- ຫຼັງຈາກການປະເມີນສຳເລັດແລ້ວ ຕ້ອງສະຫຼຸບຜົນການປະເມີນທັງໝົດ ແລ້ວສົ່ງໃຫ້ກະຊວງພາຍໃນ **ຊ້າສຸດບໍ່ໃຫ້ກາຍວັນທີ 15 ກັນຍາ 2020** ເພື່ອສັງລວມລາຍງານລັດຖະບານ.

### 6. ງົບປະມານໃນການປະເມີນຜົນ

ການປະເມີນຜົນວຽກງານ 3 ສ້າງ ໃນຄັ້ງນີ້ ແມ່ນໃຫ້ນຳໃຊ້ງົບປະມານປົກກະຕິປະຈຳປີ 2020 ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ.

## IV. ການຈັດຕັ້ງປະຕິບັດ

1. ບັນດາກະຊວງ ແລະ ອົງການອ້ອມຂ້າງສູນກາງ ແຕ່ງຕັ້ງຄະນະຮັບຜິດຊອບຂອງຕົນລົງປະສານງານ ຮ່ວມກັບຂະແໜງການຕົນປະຈຳຢູ່ທ້ອງຖິ່ນ ເພື່ອຄວາມເປັນເອກະພາບທາງດ້ານຫຼັກການ ແລະ ວາງລະດັບຄາດໝາຍທີ່ຊັດເຈນ ຢ່າງມີວິທະຍາສາດ ກ່ອນການປະເມີນຜົນຕົວຈິງ ໂດຍໃຫ້ສອດຄ່ອງກັບເງື່ອນໄຂ ແລະ ຖືກຕ້ອງກັບຕົວຈິງຂອງແຕ່ລະບ່ອນ;

2. ບັນດາແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແລະ ບ້ານ ໃຫ້ຖືເອົາວຽກການປະເມີນຜົນ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ເປັນວຽກຮີບດ່ວນທີ່ຈະຕ້ອງໄດ້ເຮັດໃຫ້ສຳເລັດຕາມຄາດໝາຍ;

3. ໃນໄລຍະດຳເນີນການປະເມີນຜົນນັ້ນ ຫາກມີຂອດໃດທີ່ບໍ່ລ່ອງຊ່ອງ ຫຼື ບໍ່ໂລ່ງລ່ຽນກັນ ຫຼື ມີເນື້ອໃນທີ່ຄຸມເຄືອກັນ ແລະ ຂໍ້ຫຍຸ້ງຍາກ ຊຶ່ງຂະແໜງການທີ່ກ່ຽວຂ້ອງບໍ່ສາມາດຕົກລົງກັນໄດ້ ຫຼື ບໍ່ສາມາດຕັດສິນໄດ້ ໃຫ້ລາຍງານ, ປະສານຫາກະຊວງພາຍໃນ ເພື່ອພ້ອມກັນແກ້ໄຂໃຫ້ຖືກຕ້ອງ ແລະ ທັນກຳນົດເວລາ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ